ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ

ຄະນະປະຈຳ

ເລກທີ 21/ຄປຈ

ນະຄອນຫຼວງວຽງຈັນ, ວັນທີ 27/03/20

# ມະຕິ
## ຄະນະປະຈຳສະພາແຫ່ງຊາດ
## ວ່າດ້ວຍການລົບລ້າງລັດຖະບັນຍັດ ເລກທີ 001/ປປທ, ລົງວັນທີ 28 ທັນວາ 2010 ວ່າດ້ວຍການກຳນົດອັດຕາອາກອນກຳໄລ ແລະ ຄ່າທຳນຽມ ສຳລັບການດຳເນີນທຸລະກິດ ໃນຕະຫຼາດຫຼັກຊັບລາວ

- ອີງຕາມ ລັດຖະທຳມະນູນແຫ່ງ ສປປ ລາວ ສະບັບປີ 2015, ມາດຕາ 53 ແລະ ກົດໝາຍວ່າດ້ວຍ ສະພາແຫ່ງຊາດ (ສະບັບປັບປຸງ ປີ 2016) ມາດຕາ 33 ວ່າດ້ວຍສິດ ແລະ ໜ້າທີ່ຂອງ ຄະນະປະຈຳສະພາແຫ່ງຊາດ;
- ອີງຕາມ ໜັງສືສະເໜີຂອງລັດຖະບານ ສະບັບເລກທີ 93/ລບ, ລົງວັນທີ 19 ສິງຫາ 2019;
- ອີງຕາມ ຜົນຂອງກອງປະຊຸມຄະນະປະຈຳສະພາແຫ່ງຊາດ ຄັ້ງວັນທີ 25 ກຸມພາ 2020.

## ຄະນະປະຈຳສະພາແຫ່ງຊາດ ຕົກລົງ:

**ມາດຕາ 1** ເຫັນດີ ລົບລ້າງການກຳນົດອັດຕາອາກອນກຳໄລ ແລະ ຄ່າທຳນຽມ ສຳລັບການດຳເນີນທຸລະກິດ ໃນຕະຫຼາດຫຼັກຊັບລາວ ທີ່ກຳນົດໄວ້ໃນລັດຖະບັນຍັດ ເລກທີ 001/ປປທ, ລົງວັນທີ 28 ທັນວາ 2010.

**ມາດຕາ 2** ສຳລັບຄ່າທຳນຽມ ການຊື້-ຂາຍຮຸ້ນ ແລະ ການໂອນຮຸ້ນຈົດທະບຽນ ແລະ ພັນທະບັດລັດຖະບານໃນຕະຫຼາດຫຼັກຊັບ ແລະ ຄ່າບໍລິການອື່ນ ທີ່ຕິດພັນກັບທຸລະກິດຫຼັກຊັບ ແມ່ນໃຫ້ປະຕິບັດ ຕາມມາດຕາ 188 ຂໍ້ 4 ຂອງກົດໝາຍວ່າດ້ວຍ ຫຼັກຊັບ (ສະບັບປັບປຸງ ປີ 2019), ສຳລັບອາກອນກຳໄລ ແລະ ອາກອນລາຍໄດ້ ຈາກການຂາຍ ຫຼື ການໂອນຮຸ້ນ ສຳລັບບໍລິສັດທີ່ຈົດທະບຽນໃນຕະຫຼາດຫຼັກຊັບ ໃຫ້ປະຕິບັດຕາມມາດຕາ 16 ຂໍ້ 2 ແລະ ມາດຕາ 35 ຂໍ້ 4 ຂອງກົດໝາຍວ່າດ້ວຍ ອາກອນລາຍໄດ້ (ສະບັບປີ 2019).

**ມາດຕາ 3** ມະຕິສະບັບນີ້ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ຄະນະປະຈຳສະພາແຫ່ງຊາດ

ປະທານ

ປານີ ຢາທໍ່ຕູ້